# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 4 ຕຸລາ 2009 (10-4-2009)

## ວິຣະຊົນທີ່ເປັນນັກຮົບ

**ຂໍ້ພຣະຄັມພີໃນບົດຮຽນ**: ມາຣະໂກ 11:12-25

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ຈະຊ່ວຍໃຫ້ທ່ານໃຊ້ຊີວິດຢູ່ໃນຄວາມເຊື່ອຢ່າງມີຊັຍຊະນະ ແລະເກີດຜົນ.

### ເປົ້າໝາຍຂອງບົດຮຽນ

ພຣະເຢຊູ ນັກຮົບຜູ້ອາດຫານ ໄດ້ສະແດງແກ່ພວກທີ່ຕິດຕາມພຣະອົງວ່າ ຊີວິດທີ່ມີຄວາມເຊື່ອນັ້ນໄດ້ຊ່ວຍພວກເຂົາໃຫ້ເຂົາເປັນນັກຮົບຜູ້ມີຊັຍຊະນະຢ່າງໃດ ໃນການໃຊ້ຊີວິດການເປັນຢູ່ຢ່າງຄຣິສຕຽນ

### ຄວາມສຳຄັນຂອງບົດຮຽນ

ໃນການທີ່ໃຊ້ຊີວິດຢູ່ແຕ່ລະວັນນັ້ນທ່ານໄດ້ຝາກຄວາມໄວ້ວາງໃຈໄວ້ກັບສິ່ງທີ່ບໍ່ຖືກຕ້ອງບໍ່? ເວລາທີ່ທ່ານວາງໃຈນຳເພື່ອນຝູງ, ເງິນຄຳ, ຫລືວຽກງານນັ້ນ ທ່ານໄດ້ສ້າງຜົນງານທີ່ສູນຫາຍເປັນ. ເຖິງຢ່າງໃດກໍຕາມ, ການກັບກາຍເປັນສາວົກຂອງພຣະຄຣິດ ນັກຮົບຕົວຈິງນັ້ນ ຈະຊ່ວຍຄຣິສຕຽນມີພລັງອຳນາດມີຊັຍຊະນະເໜືອໂລກໄດ້.

### ການສຶກສາພຣະຄັມພີ

ໃນເດືອນ ມີຖຸນາ (6) ປີ 1944, ທີ່ຫາດຊາຍ ໂອມາຫາ ແລະຫາດຊາຍອື່ນໆທີ່ຢູ່ໃກ້ເມືອງນໍມັນດີທີ່ປະເທດຝຣັ່ງເສດ ພວກທະຫານຂອງຝ່າຍພັນທະມິດໄດ້ເອົາເຮືອຮົບເຂົ້າຈອດຝັ່ງທະເລ ເພື່ອການເລີ້ມໂຈມຕີປົດປ່ອຍທະວີບຢູໂຣບຈາກເງື້ອມມືຜະເດັດການຂອງລັດທິນາຊີ ມີການເສັຽຫາຍຢ່າງມະຫາສານດ້ວຍຊີວິດແລະຊັບສິນ. ໃນປີ 1994 ຂ້າພະເຈົ້າໄດ້ຢືນຢູ່ທີ່ຫາດຊາຍນັ້ນຢ່າງຜູ້ທີ່ມີສິດເສຣີພາບ ເພາະວ່າການສູ້ຮົບຄັ້ງນັ້ນໄດ້ຮັບຊັຍຊະນະເພາະການສູ້ຮົບຢ່າງອາດຫານ.

ພວກເຮົາຍັງມີສົງຄາມອັນໃຫຍ່ທີ່ຈະຕ້ອງເຂົ້າໂຈມຕີເພື່ອເອົາຊັຍຊະນະ--ສົງຄາມທາງຈິດວິນຍານຂອງຊີວິດຄຣິສຕຽນ. ເຖິງແມ່ນວ່າການສູ້ຮົບເພື່ອຊີວິດ ແລະສິດເສຣີພາບນັ້ນມີຄວາມເສັຍຫາຍຫລາຍ, ພວກເຮົາກໍ ສາມາດສູ້ແລະຮັບຊັຍຊະນະໄດ້ດ້ວຍການປະຕິບັດເດີນຕາມພຣະເຢຊູຜູ້ນຳຂອງເຮົາ. ພຣະອົງໄດ້ມີຊັຍຊະນະ ຢ່າງອາດຫານດ້ວຍການຕາຍຂອງພຣະອົງເທິງໄມ້ກາງແຂນ ແລະການຄືນພື້ນຊີບກັບຄືນຈາກຕາຍຂອງພຣະອົງ.

ໃນບົດຮຽນຂອງເຮົາວັນນີ້ ພຣະເຢຊູຈະນຳພວກເຮົາໄປຫາຊັຍຊະນະຜ່ານທາງພຣະຄັມພີແລະຕົວຢ່າງຂອງພຣະອົງ.

**1. ຕໍ່ສູ້ກັບການທີ່ບໍ່ເກີດຜົນ**: ມາຣະໂກ 11:12-14, 20-21

ຢູ່ໃນພຣະຄັມພີເດີມ ພວກຜູ້ປະກາດພຣະທັມມັກໃຊ້ຕົ້ນໝາກເດື່ອເທດມາປຽບທຽບກັບຄົນອິສຣາເອັນ. ພຣະເຢຊູກໍໄດ້ໃຊ້ຕົ້ນເດື່ອເທດທີ່ບໍ່ເກີດໝາກມາສອນເຖິງຄວາມສໍາຄັນໃນການເກີດຜົນຂອງຊີວິດຄຣິສຕຽນຂອງພວກເຮົາ. ໄພ່ພົນຂອງພຣະເຈົ້າຄວນເກີດຜົນໃນຄວາມສໍາພັນອັນສົມບູນໃນພຣະເຈົ້າ ເໝືອນກັນກັບຕົ້ນເດື່ອເທດຕົ້ນດີທີ່ເກີດຜົນ.

ພຣະເຢຊູຫລຽວເຫັນຕົ້ນເດື່ອເທດທີ່ເຕັມໄປດ້ວຍໃບຂຽວງາມຊຶ່ງເປັນສັນຍາລັກແຫ່ງຊີວິດແລະການເຕີບໂຕທີ່ຄວນນໍາໄປສູ່ການເກີດໝາກຜົນ. ແຕ່ເມື່ອເວລາຫລຽວເຂົ້າໄປຊອກຫາໝາກໄມ້ທີ່ຕົ້ນຄວນຈະມີໝາກ, ແຕ່ພຣະອົງບໍ່ໄດ້ພົບຈັກໜ່ອຍເລີຍ. ຖ້າຈະເວົ້າແບບເຈາະຈິງ ພຣະເຢຊູເວົ້າວ່າຕົ້ນໄມ້ທີ່ບໍ່ມີໝາກແມ່ນຕົ້ນໄມ້ທີ່ໃຫຍ່ຜິດປົກກະຕິ. ເໝືອນກັນກັບທີ່ຄົນຜູ້ນຶ່ງອ້າງວ່າຕົນເອງຮັກພຣະເຈົ້າ ແຕ່ບໍ່ໄດ້ສະແດງໃຫ້ເຫັນຫຼັກຖານໃນການປ່ຽນແປງຊີວິດດ້ວຍຄວາມຮັກຂອງພຣະເຈົ້າ ຊຶ່ງຜິດເປົ້າໝາຍຂອງຊີວິດທີ່ເປັນຄຣິສຕຽນ.

ເວລາຄຣູໂຮງຮຽນວັນອາທິດຄົນນຶ່ງໄດ້ຖາມຍິງສາວຄົນນຶ່ງວ່າ ເປັນຫຍັງລາວຈຶ່ງບໍ່ຕັດສິນໃຈຮັບເອົາພຣະເຢຊູຄຣິດເທື່ອ. ລາວຕອບວ່າ, "ຂ້ອຍເຫັນເພື່ອນຂອງຂ້ອຍຫລາຍຄົນອ້າງຕົນເອງເປັນຄຣິສຕຽນ ແຕ່ບໍ່ມີຊີວິດທີ່ປ່ຽນແປງເລີຍ ການເປັນຄຣິສຕຽນນັ້ນເບິ່ງຄືບໍ່ມີຄວາມແຕກຕ່າງເລີຍ." ບາງຄົນນີ້ຫັນໜ້າໜີຈາກພຣະຄຣິດເພາະວ່າຄຣິສຕຽນທີ່ຢູ່ ຮອບຂ້າງຂອງລາວບໍ່ໄດ້ເກີດຜົນ.

ພຣະເຢຊູໄດ້ຊົງປ້ອຍດ່າຕົ້ນເດື່ອເທດນັ້ນກ່ອນພຣະອົງຈະເຂົ້າໄປຢ້ຽມພຣະວິຫານ ແລະກັບຄືນມາຫາຕົ້ນໄມ້ອີກ ຕອນກັບອອກຈາກພຣະວິຫານ. ພຣະອົງໃຊ້ຕົ້ນໄມ້ເປັນເຄື່ອງໝາຍເຖິງບັນຫາທາງຈິດວິນຍານທີ່ພຣະອົງເຫັນຢູ່ໃນການນະມັສການພຣະເຈົ້າຂອງຊີວິດພວກຊາວອິສຣາເອັນ. ພຣະວິຫານເປັນຕຶກທີ່ຫລູຫລາທີ່ສຸດ ມີການນະມັສການຢູ່ເປັນປະຈໍາ ແຕ່ພຣະເຢຊູບໍ່ເຫັນຜົນຂອງຈິດໃຈແຫ່ງນະມັສການທີ່ພຣະເຈົ້າຕັ້ງຈຸດໝາຍໄວ້.

ພວກເຮົາສ່ວນຫລາຍນະມັສການພຣະເຈົ້າຢູ່ໃນຕຶກອັນສວຍງາມ ພວກເຮົາອາດນະມັສການ "ທຸກໆເວລາທີ່ປະຕູເປີດ" ທຸກສິ່ງນີ້ດີພໍດີ ແຕ່ມັນເປັນພຽງໃບໄມ້ ບໍ່ແມ່ນໝາກໄມ້. ສິ່ງເຫລົ່ານີ້ເປັນເຄື່ອງມືທີ່ດີ ທີ່ພຣະເຈົ້າເອົາມາໃຊ້ເພື່ອປ່ຽນແປງຊີວິດຂອງພວກເຮົາ ເພື່ອໃຫ້ຜະລິດໝາກຜົນຂອງຄວາມສໍາພັນອັນສົມບູນທີ່ມີກັບພຣະອົງ.

ໝາກຜົນແບບໃດທີ່ພຣະເຢຊູຢາກເຫັນຢູ່ໃນຊີວິດຂອງພວກເຮົາ? ໃນຂະນະທີ່ພວກຮັບຕ້ອນເອົາການທໍາງານຂອງພຣະວິນຍານບໍຣິສຸດ, ພຣະອົງຊົງນໍາເອົາໝາກຜົນຂອງຫົວໃຈໃໝ່, ນິສັຍໃຈຄໍທີ່ມີຕໍ່ພຣະເຈົ້າແບບໃໝ່, ແລະການໃຊ້ຊີວິດແບບໃໝ່ (ຄາລາເຕັຽ 5:22-23). ພຣະເຢຊູຊົງບອກວ່າ ຄວາມຮັກຂອງພວກເຮົາທີ່ມີຕໍ່ຄຣິສະຕຽນຄົນອື່ນນັ້ນ ເກີດຈາກຄວາມຮັກທີ່ເຮົາມີຄວາມຮັກຕໍ່ພຣະອົງ ໃຫ້ເປັນຫລັກຖານທີ່ຊັດເຈນວ່າພວກເຮົາເປັນຂອງພຣະອົງ (ຢຮ 13:35). ພຣະເຢຊູຍັງສັນຍາອີກວ່າ ເວລາຜູ້ທີ່ເຊື່ອຮັບເອົາພຣະວິນຍານບໍຣິສຸດໂດຍຜ່ານຄວາມເຊື່ອໃນພຣະອົງພວກເຮົາກໍຈະກາຍເປັນພະຍານກ່ຽວກັບພຣະອົງ ເລີ້ມຕົ້ນແຕ່ໃນບ້ານຂອງເຮົາ ຈົນເຖິງທຸກບ່ອນທີ່ພວກເຮົາໄປ (ກຈກ 1:8). ພຣະອົງຈະຊອກຫາຜົນຂອງຊີວິດທີ່ມີຄວາມປ່ຽນແປງດ້ວຍຄວາມເຊື່ອຂອງພວກເຮົາທີ່ມີໃນພຣະອົງນັ້ນ ເໝືອນກັນກັບທີ່ພຣະອົງຊອກຫາໝາກໄມ້ຢູ່ໃນຕົ້ນເດື່ອເທດ. ການເກີດດອກອອກຜົນຫລາຍໆ ຈະນໍາເອົາໄຊຍະຊະນະ ມາສູ່ຊີວິດຂອງພວກເຮົາ ແລະຖວາຍພຣະກຽດແດ່ພຣະເຈົ້າ (ຢຮ 15:8).

**2. ຕໍ່ສູ້ກັບສິ່ງກີດຂວາງທີ່ຢູ່ໃນໂລກນີ້**: (ມຣກ 11:15-19)

ພຣະວິຫານໃນກຸງເຢຣູຊາເລັມໄດ້ຖືກແບ່ງອອກເປັນຫລາຍພາກສ່ວນສໍາລັບຄົນຫລາຍກຸ່ມທີ່ມານະມັສການ

(ພວກມະຫາປະໂລຫິດ, ພວກຜູ້ຊາຍຄົນອິສຣາເອັນ, ພວກຜູ້ຍິງອິສຣາເອັນ, ແລະ ພວກຄົນຕ່າງຊາດ). ເຂດນອກທີ່ສຸດຂອງພຣະວິຫານເປັນບ່ອນດຽວທີ່ອະນຸຍາດໃຫ້ຄົນຕ່າງຊາດເຂົ້າມານະມັສການ. ເວລາພຣະເຢຊູຊົງສະເດັດເຂົ້າມາໃນເຂດນີ້, ພຣະອົງຫລຽວເຫັນສິ່ງທີ່ລັກປຸ້ນເອົາຈຸດມຸ້ງໝາຍຂອງພຣະວິຫານໄປ. ໃນເມື່ອເວລາໄດ້ຜ່ານໄປຫລາຍປີ ເຂດນີ້ກາຍເປັນສູນການຄ້າແທນທີ່ຈະເປັນບ່ອນນະມັສການພຣະເຈົ້າ, ພວກພໍ່ຄ້າໄດ້ຂາຍສັດເພື່ອຂ້າຖວາຍບູຊາ, ມີພວກຜູ້ຂາຍແລກປ່ຽນເງິນຫຼຽນຂອງຍິວ ເພາະເປັນຫຼຽນຢ່າງດຽວທີ່ໃຊ້ໃນພຣະວິຫານ. ການຄ້າຂາຍສັດ ແລະເງິນຫຼຽນ ສຳລັບການນະມັສການນັ້ນກາຍເປັນທຸຣະກິດອັນຍິ່ງໃຫຍ່ ທີ່ເປັນເຫດໃຫ້ຄົນຕ່າງຊາດບໍ່ມີບ່ອນທີ່ນະມັສການຢ່າງງຽບສງົບເລີຍ.

ພຣະເຢຊູໄດ້ໄລ່ພວກຊື້ແລະພວກຂາຍເຄື່ອງຢູ່ໃນພຣະວິຫານອອກໄປ; ພຣະອົງໄດ້ຂ້ວມໂຕະທີ່ພວກເຂົາໃຊ້ແລກປ່ຽນເງິນ. ພຣະອົງໄດ້ຫ້າມບໍ່ໃຫ້ຜູ້ໃດຂົນເຄື່ອງຜ່ານໃນຂົງເຂດພຣະວິຫານທີ່ມີເນື້ອທີ່ເຖິງ 36 ເອັກເກີ. ພຣະເຢຊູປະກາດເອົາພຣະວິຫານໃຫ້ເປັນສະຖານທີ່ນະມັສການຢ່າງອົ່ງອາດ. ພຣະອົງໄດ້ສອນພຣະຄຳພຣະເຈົ້າໃຫ້ພວກຄົນທັງຫຼາຍເພື່ອເນັ້ນໜັກໃຫ້ເຫັນວ່າພຣະອົງກຳລັງທຳງານຮັບໃຊ້ພຣະເຈົ້າ ໂດຍອ້າງເຖິງຄຳເວົ້າຂອງຜູ້ປະກາດພຣະທັມເອຊາຢາ ແລະເຢຣະມີຢາ. ພຣະອົງໄດ້ປະກາດເຖິງສິ່ງທີ່ພຣະເຈົ້າຕ້ອງການນັ້ນໃຫ້ບ້ານຂອງພຣະອົງເປັນສະຖານທີ່ນະມັສການສຳລັບຄົນທົ່ວປະເທດ ແລະຈະບໍ່ໃຫ້ມີສິ່ງໃດຂັດຂວາງຈຸດມຸ້ງໝາຍຂອງພຣະເຈົ້າສຳລັບພຣະວິຫານເປັນອັນຂາດ.

ພວກເຮົາຄວນປ້ອງກັນຮັກສາເວລານະມັສການຮ່ວມກັນໃນວິຫານຂອງພວກເຮົາ ພວກເຮົາຄວນປະຕິເສດກິຈການໃນວັນອາທິດທີ່ຂັດຂວາງພວກເຮົາໃຫ້ຫ່າງຈາກພິທີການທີ່ເປັນເຮືອນແລະຄອບຄົວຂອງພຣະເຈົ້າ. ເວລາທີ່ພວກເຮົາໂຮມກັນເພື່ອນະມັສການ, ພວກເຮົາຄວນຂັບໄລ່ການເວົ້າຂວັນນິນທາ ແລະຄວາມຂົມຂື່ນເຕັມໄປດ້ວຍສຽງຮ້ອງອຶກກະທຶກຢູ່ໃນໃຈທີ່ບັງເຮົາບໍ່ໃຫ້ເຮົາໄດ້ຍິນສຽງຂອງພຣະເຈົ້າ. ເຮົາຕ້ອງປ້ອງກັນເວລານະມັສການສ່ວນຕົວຂອງເຮົາ. ພິທີນະມັສການໃນວັນອາທິດສຳຄັນ ແຕ່ວ່າຍັງບໍ່ພໍທີ່ຈະລ້ຽງພວກເຮົາທາງຈິດວິນຍານໃຫ້ກຸ້ມໝົດອາທິດໄດ້ ພວກເຮົາຕ້ອງມີເວລາແລະສຖານທີ່ຕັ້ງໄວ້ຕ່າງຫາກເພື່ອອ່ານພຣະຄຳຂອງພຣະເຈົ້າ, ແລກປ່ຽນຊີວິດຂອງເຮົາກັບພຣະອົງດ້ວຍການອ້ອນວອນພາວັນນາອະທິຖານ, ແລະງ່ຽງຫູຟັງພຣະອົງເວລາພຣະອົງເວົ້າກັບຈິດໃຈຂອງເຮົາ.

ເວລາຮ່ວມສາມັກຄີທັມນະມັສການ ແລະການນະມັສການສ່ວນຕົວ ຈະຊ່ວຍຕຽມພວກເຮົາໃຫ້ໄດ້ຮັບຊັຍຊະນະຝ່າຍຈິດວິນຍານ. ພວກເຮົາຖືກຮຽກເອີ້ນໃຫ້ເປັນວິຫານຂອງພຣະວິນຍານບໍຣິສຸດ (1 ກຣທ 6:19-20) ເຫດສະນັ້ນ ພວກເຮົາຈະຕ້ອງຮັກສາຊີວິດຂອງພວກເຮົາໃຫ້ປາສຈາກສິ່ງທີ່ຂັດຂວາງເອົາເຮົາໄປຈາກເປົ້າໝາຍຝ່າຍວິນຍານ. ພວກເຮົາຕ້ອງກະທຳສິ່ງທີ່ພຣະເຢຊູຊົງກະທຳຢູ່ໃນພະວິຫານກຸງເຢຣູຊາເລັມ, ພວກເຮົາຕ້ອງຕໍ່ສູ້ເພື່ອຮັກສາຊີວິດຂອງພວກເຮົາໃຫ້ເປັນສະຖານທີ່ຮັບໃຊ້ແລະນະມັສການພຣະເຈົ້າ.

### 3. <u>ຕໍ່ສູ້ດ້ວຍພະລັງທາງຄວາມເຊື່ອ</u>: (ມຣກ 11:22-25)

ຄວາມເຊື່ອບໍ່ແມ່ນສັ່ງໃຫ້ພຣະເຈົ້າເຮັດສິ່ງທີ່ພວກເຮົາຕ້ອງການ--ນັ້ນແມ່ນການມີຄວາມເຊື່ອໃນຕົວເຮົາເອງ. ການທີ່ມີຄວາມເຊື່ອໃນພຣະເຈົ້າຄືການເຊື່ອໃນຣິດອຳນາດຂອງພຣະເຈົ້າ ແລະການຕຽມພ້ອມທີ່ຈະທຳງານຂອງພຣະອົງຢູ່ໃນຊີວິດຂອງພວກເຮົາແລະຢູ່ໃນໂລກ. ຄວາມເຊື່ອຜູກພັນພວກເຮົາໃສ່ສິ່ງທີ່ພຣະເຈົ້າຕ້ອງການເຮັດ; ຄວາມເຊື່ອບໍ່ແມ່ນເລ້ຫລ່ຽມຫລອກໃຫ້ພຣະເຈົ້າເຮັດສິ່ງທີ່ເຮົາຕ້ອງການໃຫ້ພຣະເຈົ້າເຮັດ.

ພຣະເຢຊູຊົງກ່າວວ່າ ດ້ວຍຄວາມເຊື່ອໃນພຣະເຈົ້າ ພວກເຮົາສາມາດສັ່ງໃຫ້ໜ່ວຍພູຍ້າຍເຄື່ອນທີ່ໄປ ແລະ

ຖືກໂຍນລົງໄປໃນທະເລໄດ້. ຄວາມເຊື່ອແມ່ນການຮູ້ວ່າພຣະເຈົ້າຍິ່ງໃຫຍ່ກວ່າໜ່ອຍພູໃດໆທີ່ຂັດຂວາງວິທີທາງການໃຊ້ຊີວິດຂອງເຮົາເພື່ອພຣະເຈົ້າ. ຂ້າພະເຈົ້າເຄີຍໄດ້ຍິນບາງຄົນເວົ້າເຖິງຄວາມຈິງຢ່າງນີ້: ຄວາມເຊື່ອບໍ່ແມ່ນບອກພຣະເຈົ້າວ່າໜ່ອຍພູຂອງເຮົານັ້ນໃຫຍ່ສໍ່າໃດ ຄວາມເຊື່ອນັ້ນແມ່ນບອກໜ່ອຍພູຂອງເຮົາວ່າ ພຣະເຈົ້າຂອງເຮົານັ້ນໃຫຍ່ສໍ່າໃດ.

ທ່ານໝໍບອກນາງ ແຊນລີ ວ່າລາວອາດຈະມີຊີວິດຢູ່ພຽງອາທິດດຽວເທົ່ານັ້ນ. ໃນຖານະທີ່ເປັນສິດຍາພິບານ ແລະເພື່ອນຂອງລາວ ຂ້າພະເຈົ້າກໍຢາກຮູ້ວ່າລາວຈະເຂົ້າໃຈແບບໃດກ່ຽວກັບສິ່ງທີ່ເກີດຂຶ້ນຢູ່ກັບລາວ. ໃນຂະນະທີ່ຂ້າພະເຈົ້າສົນທະນາກັບລາວຢູ່ ລາວບອກຂ້າພະເຈົ້າເຖິງບ່ອນທີ່ລາວແຂວນຄວາມຫວັງ ແລະຄວາມໝາຍຢູ່ໃນທ່າມກາງການເຈັບປ່ວຍຂອງລາວ. ລາວເວົ້າວ່າ, "ຂ້ານ້ອຍຮູ້ວ່າພຣະເຈົ້າເປັນຜູ້ບັງຄັບບັນຊາ ແລະຂ້ານ້ອຍກໍເປັນຂອງພຣະອົງ." ຄວາມເຊື່ອຂອງລາວກໍບໍ່ໄດ້ລົບລ້າງພຍາດມະເຮັງອອກຈາກລາວ, ແຕ່ມັນໄດ້ຍົກຍ້າຍໜ່ອຍພູແຫ່ງຄວາມຢ້ານກົວທໍຣະມານນັ້ນອອກໄປ. ໃນທ່າມກາງຮ່ອມພູອັນມືດມົນຂອງລາວ, ຊີວິດຂອງລາວໄດ້ເກີດໝາກຜົນແຫ່ງຄວາມເຊື່ອ ຄືຄວາມໝັ້ນໃຈອັນງຽບສງົບທີ່ບໍ່ມີຫຍັງຈະແຍກເອົາລາວອອກຈາກຄວາມຮັກຂອງພຣະເຈົ້າໄດ້.

ພຣະເຢຊູໄດ້ຊີ້ໃຫ້ເຮົາເຫັນພູເຂົາອັນໃຫຍ່ມະຫາສານທີ່ພຣະເຈົ້າຕ້ອງການຍ້າຍອອກຈາກຊີວິດຂອງພວກເຮົາ--ພຣະອົງຕ້ອງການໃຫ້ເຮົາໄວ້ວາງໃຈໃນພຣະອົງໃຫ້ພໍເພື່ອຈະຕັດສິນໃຈເລືອກໃຫ້ອະພັຍຄົນອື່ນ. ເມື່ອເຮົາຢືນຢູ່ຕໍ່ໜ້າພຣະເຈົ້າຜູ້ນໍາເອົາຊັຍຊະນະຝ່າຍວິນຍານໃນຊີວິດເຮົາດ້ວຍການໃຫ້ອະພັຍພວກເຮົາ, ເຮົາກໍຮູ້ວ່າການໃຫ້ອະພັຍສາມາດປົດປ່ອຍເຮົາຈາກຄວາມເຈັບປວດຈາກອະດີດ ແລະຊ່ວຍປົວແປງຄວາມສັມພັນກັບຄົນອື່ນໃຫ້ດີຄືນ. ການໃຫ້ອະພັຍຄົນອື່ນເປັນໝາກຜົນທາງຈິດວິນຍານທີ່ພຣະເຈົ້າປະທານໃຫ້.

## ບົດຮຽນຊີວິດ:

ການສູ້ຮົບມີຄວາມລໍາບາກຫລາຍ ເຮົາຈະເສັຽຫລືມີຊີວິດ ແລະອິສຣະພາບຂຶ້ນຢູ່ກັບວິທີທີ່ເຮົາຕິດຕາມຜູ້ນໍາ ແລະປະເຊີນໜ້າກັບຄວາມຫຍຸ້ງຍາກຝ່າຍວິນຍານ.

- ຈົ່ງວັດແທກສຸຂພາບຊີວິດຝ່າຍວິນຍານດ້ວຍຜົນທີ່ເກີດຈາກຊີວິດຂອງທ່ານ. ອາສັຍພຣະເຢຊູ ແລະຕິດຕາມພຣະອົງ ພາໃຫ້ເກີດການປ່ຽນແປງ ອຸປນິສັຍ, ສິ່ງທີ່ຕ້ອງການ, ແລະ ການສະແດງຕົວຂອງທ່ານ.
- ຈົ່ງປ້ອງກັນຄວາມສັມພັນຂອງທ່ານກັບພຣະຄຣິດຈາກສິ່ງກີດຂວາງຕ່າງໆ, ຕັ້ງເວລາ ແລະ ຖວາຍຈິດໃຈໄວ້ສໍາລັບນະມັສການພຣະເຈົ້າທາງສ່ວນຕົວ ແລະ ຮ່ວມກັບຄົນອື່ນ.
- ຈົ່ງໄວ້ວາງໃຈໃນພຣະເຈົ້າ ຢ່າສັບສົນລະຫວ່າງຄວາມເຊື່ອຢູ່ໃນພຣະຄັມພີ ກັບຄວາມເຊື່ອທີ່ຕົນເອງຕ້ອງການ. ຈົ່ງເຊື່ອໃນຣິດອໍານາດຂອງພຣະເຈົ້າ ແລະພ້ອມທີ່ຈະໃຊ້ຊີວິດທໍາງານໃນໂລກຂອງພຣະອົງ.
- ຈົ່ງປ່ອຍຕົວເອງໃຫ້ເປັນອິສຣະຈາກຄວາມທຸກ ແລະ ຄວາມສໍາພັນອັນແຕກຫັກຈາກອະດີດ ດ້ວຍການຍອມໃຫ້ອະພັຍຄົນອື່ນຕາມທີ່ພຣະຄຣິດຮຽກຮ້ອງໃຫ້ກະທໍາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS